ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສໍານັກງານໃຫຍ່

ເລກທີ ..1509..../ທຄຕລ..2022..

ນະຄອນຫຼວງວຽງຈັນ, ວັນທີ ....15 JUL 2022......

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາບໍລິສັດ ຕິດຕັ້ງສ້ອມແປງ/ຕົວແທນຈໍາໜ່າຍອຸປະກອນໄອທີ.

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາການບໍລິການບໍາລຸງຮັກສາ ໝໍ້ເກັບໄຟຟ້າສໍາຮອງ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງບັນດາບໍລິສັດ ທີ່ສົນໃຈເຂົ້າຮ່ວມຍື່ນຊອງປະມູນລາຄາ ການບໍລິການບໍາລຸງຮັກສາ ໝໍ້ເກັບໄຟຟ້າສໍາຮອງ (UPS) ແບບບໍ່ລວມອາໄຫຼ່ ດັ່ງມີລາຍລະອຽດລຸ່ມນີ້:

| ລ/ດ | ລາຍການ | ລາຍລະອຽດໜ້າວຽກ | ຈໍານວນ (ໜ່ວຍ) |
|---|---|---|---|
| 1 | UPS APC 40kva | • ຜູ້ຮັບເໝົາຕ້ອງລົງກວດກາ ແລະ ບໍາລຸງຮັກສາ UPS ທຸກໆ 3 ເດືອນ ລວມ 4 ຄັ້ງ/ປີ (ບໍລິການຕະຫຼອດ 24 ຊມ ສະເພາະຕອນຈັກມີບັນຫາ).<br>• ກວດເຊັກລະບົບໄຟເຂົ້າ-ອອກ UPS.<br>• ກວດເຊັກເປີເຊັນຂອງການໃຊ້ໄຟ (% Load) ແລະ ເວລາທີ່ Battery UPS ບໍ່ສາມາດຈ່າຍກະແສ ໄຟຟ້າໄປລ້ຽງ Load ໃນຫ້ອງ Server ແລະ PC.<br>• ກວດເຊັກການທໍາງານຂອງພັດລົມ Power module ພ້ອມອະນາໄມ.<br>• ກວດເຊັກ Battery ພ້ອມອະນາໄມ.<br>• ທໍາຄວາມສະອາດທາງນອກ ແລະ ໃນ ຂອງ UPS.<br>• ກວດເຊັກການທໍາງານທີ່ຜ່ານມາຂອງ UPS (checking Even log).<br><br>ໝາຍເຫດ: ການບໍາລຸງຮັກສາ ແມ່ນບໍ່ລວມຄ່າອາໄຫຼ່ ຫຼື ອຸປະກອນທີ່ເກີດຈາກການຫຼູ້ຍຫ້ຽນ ຫຼື ໝົດອາຍຸການໃຊ້ງານ | 2 |
| 2 | UPS APC 30kva | | 5 |
| 3 | Symmetra 64k | | 1 |
| 4 | UPS APC 80kva | | 2 |

➤ **ເງື່ອນໄຂຂອງຜູ້ສະໜອງ ທີ່ມີຄວາມຕ້ອງການຍື່ນຊອງປະມູນຕ້ອງປະກອບເອກະສານດັ່ງນີ້:**

✔ **ເອກະສານຊອງທີ 1 (ບໍ່ປິດຊອງ):**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດໍາເນີນທຸລະກິດດ້ານອຸປະກອນໄອທີ, ເຄື່ອງໃຊ້ໄຟຟ້າ, ຕິດຕັ້ງໄຟຟ້າ, ຕ້ອງມີວິຊາການສະເພາະ ແລະ ດໍາເນີນທຸລະກິດ ຢ່າງໜ້ອຍ 03 ປີຂຶ້ນໄປ, ພ້ອມທັງສໍາເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2021, ຜົນງານຜ່ານມາທີ່ເຄີຍສະໜອງ ການບໍລິການບໍາລຸງຮັກສາ UPS ໃຫ້ພາກສ່ວນອື່ນ, ໃບຢັ້ງຢືນການເປັນຕົວແທນຈໍາໜ່າຍ (ຖ້າມີ) ແລະ ຂໍ້ມູນຕ່າງໆ ຕາມ format ທີ່ຕິດຄັດມາພ້ອມນີ້.
2. ເອກະສານຂ້າງເທິງແມ່ນໃຫ້ຍື່ນກ່ອນ ວັນສຸກ **ວັນທີ 22/07/2022 ເວລາ 11:00 ໂມງ** ໂດຍການສົ່ງຟາຍເຂົ້າ E-mail: procurement@bcel.com.la



ເລກທີ 01, ຖະໜົນ: ປາງຄໍາ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245. Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

- **ເອກະສານຊອງທີ 2 (ປິດຊອງ):**

1. ໃບສະເໜີລາຄາໃຫ້ລະບຸລາຄາຫົວໜ່ວຍແຕ່ລະລາຍການ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ.
2. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ **(ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 29/08/2022)** ຫຼື ແຊັກທີ່ວິຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.
3. ໃນ **ວັນສຸກ ວັນທີ 29/07/2022 ເວລາ 09:00 ໂມງ** ແມ່ນມື້ເປີດຊອງປະມູນ ສະນັ້ນໃຫ້ຜູ້ສະໜອງທີ່ຜ່ານການຄັດເລືອກຈາກເອກະສານຊອງທີ 1 ມາຍື່ນຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 3 ອາຄານ C.

- **ໝາຍເຫດ:** ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.

- **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

1. ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຮັບຜິດຊອບຄ່າທຳນຽມໃນການຈົດທະບຽນສັນຍາ.
2. ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ແມ່ນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.
3. ຜູ້ທີ່ຊະນະການປະມູນ ແມ່ນບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ, ແຕ່ຈະຄັດຈາກປະສົບການ ແລະ ແກ້ໄຂບັນຫາຕ່າງໆໄດ້ ໃນເມື່ອ UPS ມີບັນຫາ ທາງກາງເວັນ ແລະ ກາງຄືນ, ຄວາມຊຳນານງານພ້ອມ.

- **ການຊຳລະແບ່ງຈ່າຍເປັນ 4 ງວດ:** ງວດລະ 25% ຂອງມູນຄ່າສັນຍາທັງໝົດ, ເຊິ່ງຈະຊຳລະພາຍໃນ 7 ວັນລັດຖະການ ນັບຈາກການໃຫ້ບໍລິການແຕ່ລະຄັ້ງສຳເລັດ ແລະ ໄດ້ຮັບການຢັ້ງຢືນຈາກ ທຄຕລ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການ**

ຄຳພຸດ ສິດທິລາດ

ສອບຖາມເພີ່ມເຕີມ:

ທ່ານ ຈັນທະພອນ 5533 4674

ທ່ານ ສຸດທະນີ 2222 1248

# (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ………..../ທຄຕລ, ລົງວັນທີ …………………..

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | ໝາຍເຫດ |
|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ 2020 | ໃບອະນຸຍາດດຳເນີນທຸລະກິດ 2021 | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ໜ້າວຽກ | |
| 1 | ບ/ສ……… | (xxx/ 02.01.2015) | (xxx/ 02.01.2015) | (xxx/ 02.01.2015) | …. ປີ | (ໃຫ້ລະບຸ) | | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ .......................
ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:
ຊື່:
ໂທ: